
ການປູກມອນ-ລ້ຽງມ້ອນ
ຄູ່ມືການນຳໃຊ້ສຳລັບຊາວບ້ານ
ປູກມອນງາມ ແນວພັນດີ ສິ່ງມີຄ່າ
ລ້ຽງມ້ອນມາ ຫຼາຍກະດົ້ງ ຄົງໃຫຍ່ໄວ
ໄດ້ຝັກຫຼອກ ມີໃໝງາມ ເອົາໄວ້ໃຊ້
ຫຼືເອົາຂາຍ ກາຍເປັນເງິນ ລ້ຽງຄອບຄົວ
SILK PRODUCTION

## ຄູ່ມືມອນ - ມ້ອນສຳລັບຊາວບ້ານ

## 1.ພັນມອນທີ່ຫາໄດ້ໃນບ້ານເຮົາ.

### 1.1 ມອນແກ້ວ

ມອນແກ້ວ ເປັນມອນທີ່ເກີດຕາມທຳມະຊາດ, ໃບໃຫ່ຍປູກງ່າຍ, ທົນທານຕໍ່ສະພາບແວດລ້ອມໄດ້ດີ ເໝາະສົມກັບການລ້ຽງມ້ອນອາຍຸ 4 ແລະ ອາຍຸ 5.

### 1.2 ມອນນ້ອຍ.

ມອນນ້ອຍ ເປັນມອນພື້ນບ້ານທີ່ເຄີຍໃຊ້ລ້ຽງມ້ອນ ຄູ່ກັບແມ່ຍິງລາວ ມາແຕ່ນານແສນນານ, ປູກງ່າຍທົນທານຕໍ່ພະຍາດ ແລະ ສະພາບແວດລ້ອມໄດ້ດີແຕ່ໃບນ້ອຍ.

### 1.3 ມອນຍອດກ່ຳ.

ມອນຍອດກຳ ເປັນມອນພື້ນບ້ານອີກຊະນິດໜຶ່ງ ທີ່ນິຍົມກັນໃຊ້ປູກກໍ່ງ່າຍ, ທົນທານຕໍ່ສະພາບແວດລ້ອມໄດ້ດີ, ໃບກໍ່ໃຫ່ຍ, ໃບໜາກ່ວາໃບມອນນ້ອຍ. ນອກນີ້ຍັງມີມອນອີກຫລາຍຊະນິດທີ່ເກີດຢູ່ຕາມທຳມະຊາດ ທີ່ເອີ້ນຊື່ແຕກຕ່າງກັນໄປຕາມແຕ່ລະທ້ອງຖິ່ນ.



ມອນນ້ອຍພັນພື້ນບ້ານ.



ມອນແກ້ວພັນພື້ນບ້ານ.

## 2.ໂຕມ້ອນໂຕເປັນແນວໃດ?

- ໂຕມ້ອນຄ້າຍຄືໂຕບົ້ງ.
- ລຳຕົວເປັນປ້ອງໆມີ 11 ປ້ອງ.
- ມີຮູດັງ 9 ຄູ່ຢູ່ຂ້າງລຳຕົວແຕ່ລະປ້ອງ.
- ມີຂາ 8 ຄູ່ ( ໜ້າ 4 ຄູ່, ກາງ 3 ຄູ່, ຫລັງ 1 ຄູ່ ).
- ມີນໍຢູ່ເທິງປ້ອງສຸດທ້າຍເອີ້ນວ່າຫາງ.
- ມີຊີວິດຜ່ານ4ຂັ້ນຕອນຄື:ໄຂ່,ໂຕມ້ອນດັກແດ້ ແລະ ແມງບີ້.



**ມ້ອນນ້ອຍອາຍຸ** 1.



**ມອນອາຍຸ**3,4 **ແລະ** 5.





**ວົງຈອນຊີວິດຂອງມ້ອນ.** **ມ້ອນນາງລາຍອາຍຸ 5.**

## 3.<u>ຜົນໄດ້ຮັບຈາກການລ້ຽງມ້ອນ.</u>

- ຟື້ນຟູຮັກສາມູນເຊື້ອອັນດີງາມຂອງປະຊາຊົນລາວບັນດາເຜົ່າ.
- ມີລາຍຮັບເພີ່ມຈາກການຂາຍ:

+ ຂີ້ມ້ອນ.

+ ແດ້ມ້ອນ ( ດັກແດ້ ).

+ ຝັກຫລອກ, ເສັ້ນໄໝ.

**Ã ເສັ້ນໄໝເປັນສິນຄ້າທີ່ບໍ່ບູດເນົ່າເກັບຮັກສາໄວ້ໄດ້ດົນ.**

- ຕະລາດມີຄວາມຕ້ອງການຫລາຍທັງພາຍໃນ ແລະ ຕ່າງປະເທດ.





**ມ້ອນອາຍຸ 3.** **ຝັກຫລອກມ້ອນພື້ນເມືອງ.**



| | | | | |
|---|---|---|---|---|
| ໄວລັສ) | -ບໍ່ກິນໃບມອນ<br>-ຂີ້ຫລາຍຜິດປົກກະຕິ.<br>-ຕົວບວມ,ຫົດ<br>- ເວລາທີ່ຕາຍເນົ່າເປັນສີດຳ. | ອາກາດບໍ່ຖ່າຍເທ,ໃສ່ໂຕມ້ອນຫລາຍໃນກະດົ້ງມ້ອນກິນໃບມອນປຽກ. | ອາດ,ນຳໃຊ້ຢາໃຫ້ຖືກຕ້ອງແລະຕໍ່ເນື່ອງ,ເຮືອນລ້ຽງມ້ອນຕ້ອງມີປ່ອງຍ້ຽມທີ່ສາມາດຖ່າຍເທອາກາດໄດ້ດີ | -ຝົນຕົກຫລາຍຄວາມຊຸ່ມໃນອາກາດສູງ. |
| ມັສຄາດີນ (ເກີດຈາກເຊື້ອລາ) | -ເຄື່ອນໄຫວຊ້າ<br>-ບໍ່ກິນອາຫານ<br>-ລຳຕົວມີຈຸດສີດຳ<br>-ຮາກ,ຂີ້ແຫລວ | -ເກີດຈາກເຊື້ອລາສາມາດປິວໄປຕາມອາກາດ<br>-ຂາດການອະນາໄມ,ບໍ່ໝັ່ນເສຍຂີ້ມ້ອນ,ມີຂີ້ມ້ອນຫລາຍໃນກະດົ້ງພາໃຫ້ຊຸ່ມແລ້ວຕົກ ໂໝກຂຶ້ນເຊື້ອລາ | ທຳຄວາມສະອາດອຸປະກອນຕ່າງໆແລະເຮືອນລ້ຽງມ້ອນທຸກຄັ້ງກ່ອນແລະຫລັງການລ້ຽງມ້ອນ<br>-ຊີດຢາຄັ້ງທີ 1 ຫລັງຈາກເກັບມ້ອນອອກ,ຄັ້ງທີ2 ຫລັງຈາກລ້າງອຸປະກອນແລ້ວ | ຕົ້ນລະດູຝົນອາກາດຮ້ອນອົບເອົ້າ |

- ໄດ້ດີ ແລະໄວໂດຍສະເພາະທ້າຍເດືອນ 6 ຫາທ້າຍເດືອນ 8 ຂອງທຸກໆປີ.

**I .<u>ເອົາໃຈໃສ່ແນວໃດການລ້ຽງມ້ອນລະດູຝົນ</u>**

- ເຮືອນລ້ຽງມ້ອນ ຕ້ອງອາກາດຖ່າຍເທດີ ສາມາດປັບອຸນະພູມ ແລະ ຄວາມຊຸ່ມໄດ້.
- ເອົາໃຈໃສ່ອະນາໄມ ເປັນປະເດັນທີ່ສຳຄັນອັນດັບ 1.
- ອະນາໄມອຸປະກອນທຸກອັນທີ່ຮັບໃຊ້ການລ້ຽງມ້ອນ.
- ລ້າງມືກ່ອນການລ້ຽງມ້ອນທຸກຄັ້ງ.
- ຕ້ອງໝັ່ນເສຍຂີ້ມ້ອນບໍ່ໃຫ້ຂີ້ມ້ອນຄ້າງຫລາຍໃນກະດົ້ງເພາະຈະພາໃຫ້ເກີດພະຍາດໃສ່ໂຕມ້ອນ.
- ຢ່າລ້ຽງຫລາຍເກີນຄວາມສາມາດ.

**<u>ຕາຕະລາງພະຍາດຂອງໂຕມ້ອນທີ່ມັກເກີດຢູ່ໃນລາວ.</u>**

| ຊະນິດພະຍາດ | ອາການ | ສາເຫດ | ວິທີແກ້ໄຂ | ລະດູທີ່ມັກເກີດ |
|---|---|---|---|---|
| ໂລກເຕີຫລື ເອີ້ນວ່າໂລກ ນ້ຳເຫລືອງ (ເກີດຈາກເຊື້ອ ໄວລັສ) | -ບໍ່ກິນໃບມອນ<br>-ກະວົນກະວາຍ<br>-ໄຕ່ແຄມກະດົ້ງ<br>-ຂໍ້ລະຫ່ວາງປ້ອງ ຈະບວມ<br>-ມີນ້ຳເຫລືອງໄຫລ ອອກຕາມຜີວໜັງ | ຂາດການອະ ນາໄມ, ອາກາດ ບໍ່ຖ່າຍເທ, ໃສ່ ໂຕມ້ອນຫລາຍ ໃນກະດົ້ງ,ມ້ອນ ໄດ້ກິນໃບມອນ ປຽກ, ກິນໃບ ມອນບໍ່ຖືກກັບອ າຍຸມ້ອນ | ອະນາໄມອຸປະ ກອນໃຫ້ສະອາດ, ນ◌ໃຊ້ຢາໃຫ້ຖືກ ຕ້ອງແລະຕໍ່ເນື່ອງ, ເຮືອນລ້ຽງມ້ອນ ຕ້ອງມີປ່ອງຢ້ຽມສາ ມາດຖ່າຍເທອາ ກາດໄດ້,ບໍ່ເກືອໃບ ມອນປຽກ | -ລະດູຝົນ<br>-ອາກາດຮ້ອນ<br>-ຄວາມຊຸ່ມສູງ |
| ໂລກໄສ້ຂາວ (ເກີດຈາກເຊື້ອ | -ມ້ອນຈະເລີນເຕີບ ໂຕຊ້າ | ຂາດການອະນາ ໄມ, | ອະນາໄມອຸປະ ກອນໃຫ້ສະ | -ລະດູຝົນ<br>-ອາກາດຮ້ອນ |






**ຜະລິດຈາກແພໄໝ.** **ເສັ້ນໄໝພື້ນເມືອງ.**

## 4.<u>**ເລືອກບ່ອນເຮັດສວນມອນ**</u>.

- ເລືອກບ່ອນດິນດີດິນຊາຍປົນດິນໜຽວ.
- ເລືອກດິນແຄມແມ່ນ້ຳຍິ່ງເປັນການດີ.
- ບໍ່ໄກຈາກເຮືອນເກີນໄປ.
- ບໍ່ໄກ້ກັບບ່ອນທີ່ໃຊ້ສານເຄມີເຊັ່ນ: ຢາຂ້າແມງໄມ້ ,ຢາຂ້າຫຍ້າ ແລະ ສວນຢາສູບ.



**ສວນມອນຢູ່ແຄມນ້ຳ.**

## 5 ການເລືອກຕົ້ນມອນມາປູກເພື່ອລ້ຽງມ້ອນ.

- ໃບຕ້ອງປານກາງຫາໃຫ່ຍ.
- ຕຸ່ມຕາຕ້ອງຖີ່, ຄຸນຄ່າອາຫານສູງ.
- ຕັດແຕ່ງແລ້ວແຕກກິ່ງງ່າຫລາຍ.
- ທົນຕໍ່ສະພາບແວດລ້ອມໄດ້ດີ.
- ປູກແລ້ວມີອາຍຸຍາວ.
- ໃຫ້ຜົນຜະລິດສູງ.ເຊັ່ນ:ມອນຍອດກ່ຳແລະມອນແກ້ວ, ຖ້າມີການຕັດແຕ່ງຈະໃຫ້ໃບຕະລອດປີ, ໃບໃຫ່ຍ ແລະ ໜາເກັບໄດ້ງ່າຍ.



**ຕົ້ນມອນຍອດກ່ຳ.**

## 6.ການປູກຕົ້ນມອນ.

- ການປູກຕົ້ນມອນຕ້ອງກຽມດິນຄັກແນ່ເຊັ່ນ: ໄຖ, ຄາດ ຫລື ຂຸດຂຸມເສຍກ່ອນ.



- ລ້ຽງມ້ອນໄດ້ດີແມ່ນເດືອນ 3 - 6 ແລະ 9 -11 ຂອງ.
- ແຕ່ລະປີເທົ່ານັ້ນເພາະອາກາດບໍ່ຮ້ອນແລະບໍ່ໜາວເກີນໄປ.

## 19. ມ້ອນມັກເກີດພະຍາດຫລາຍກ່ວາໝູ່ແມ່ນເດືອນໃດ.

- ມ້ອນມັກເກີດພະຍາດ ແລະ ຕາຍຫລາຍທີ່ສຸດແມ່ນລະດູຝົນອຸຫະພູມຂຶ້ນສູງ ຄວາມຊຸ່ມຊື່ນໃນອາກາດສູງ ເປັນສາເຫດໃຫ້ເຊື້ອພະຍາດຂະຫຍາຍຕົວໄດ້ດີ ແລະ ໄວໂດຍສະເພາະທ້າຍເດືອນ 6 ຫາທ້າຍເດືອນ 8 ຂອງທຸກໆປີ.

## 20 .ເອົາໃຈໃສ່ແນວໃດການລ້ຽງມ້ອນລະດູຝົນ.

- ເຮືອນລ້ຽງມ້ອນ ຕ້ອງອາກາດຖ່າຍເທດີ ສາມາດປັບອຸນະພູມ ແລະ ຄວາມຊຸ່ມໄດ້.
- ເອົາໃຈໃສ່ອະນາໄມເປັນປະເດັນທີ່ສຳຄັນອັນດັບ 1.
- ອະນາໄມອຸປະກອນທຸກອັນທີ່ຮັບໃຊ້ການລ້ຽງມ້ອນ.
- ລ້າງມືກ່ອນການລ້ຽງມ້ອນທຸກຄັ້ງ.
- ໃຊ້ສານເຄມີເຂົ້າຊ່ວຍ ໃນການອະນາໄມເຊັ່ນ: ຢາກູ້ລີນ ແລະ ຟໍມາລີນກ່ອນ ແລະ ຫລັງການລ້ຽງມ້ອນທຸກຄັ້ງ.
- ບໍ່ເກືອມອນປຽກ,ບໍ່ເອົາໃບມອນອ່ອນເກືອໂຕມ້ອນແກ່.
- ບໍ່ລ້ຽງມ້ອນແໜ້ນໃນກະດົ້ງ.
- ຕ້ອງໝັ່ນເສຍຂີ້ມ້ອນ.
- ບໍ່ໃຫ້ຂີ້ມ້ອນຄ້າງຫລາຍໃນກະດົ້ງເພາະຈະພາໃຫ້ເກີດພະຍາດໃສ່ໂຕມ້ອນ.
- ຢ່າລ້ຽງຫລາຍເກີນຄວາມສາມາດ.

+ ການລ້ຽງມ້ອນເພື່ອເປັນເສດຖະກິດ.

- ການລ້ຽງມ້ອນເປັນປະເພນີ ມີຕົ້ນມອນເທົ່າໃດກໍ່ລ້ຽງໄດ້ ອາດຈະລ້ຽງ 1 ຫລື 2 ກະດົ້ງເທົ່ານັ້ນ.

- ແຕ່ການລ້ຽງມ້ອນເປັນເສດຖະກິດຢ່າງໜ້ອຍຕ້ອງມີຕົ້ນມອນ 1500 ຕົ້ນ ໃນເນື້ອທີ່ 1 ໄລ່ຂຶ້ນໄປ.

- ສາມາດລ້ຽງມ້ອນໄດ້ 15 - 20 ດົ້ງ, ໄດ້ຝັກຫລອກ 15 - 20 ກິໂລ ຕໍ່ຄັ້ງລ້ຽງ

- ຖ້າຄອບຄົວມີຄວາມພ້ອມອາດຈະປູກຕົ້ນມອນຫລາຍໄລ່ຈະລ້ຽງໄດ້ຫລາຍຂຶ້ນຕາມລຳດັບ.



**ສວນມອນຕັດແຕ່ງພ້ອມທີ່ຈະລ້ຽງມ້ອນ**

## 18. <u>ເດືອນທີ່ລ້ຽງມ້ອນໄດ້ດີຢູ່ໃນລາວແມ່ນເດືອນໃດ?.</u>

- ລະດູການຢູ່ໃນລາວແບ່ງອອກເປັນ 2 ລະດູຢ່າງຈະແຈ້ງຄືລະດູແລ້ງ ແລະ ລະດູຝົນ - ລະດູແລ້ງອາກາດໜາວເຢັນ.
- ລະດູຝົນອາກາດຮ້ອນຊຸ່ມ ຝົນຕົກລົນຄວາມຊຸ່ມໃນອາກາດສູງ.



- ເບັ້ຍມອນທີ່ຈະເອົາມາປູກຕ້ອງຜ່ານການຊຳໃນໜານມາ ກ່ອນ 3 ເດືອນມີຮາກເປັນສີນ້ຳຕານຈຶ່ງຍ້າຍໄປປູກໃນສວນ.
- ຄວນປູກມອນເປັນແຖວມີຂະໜາດຄັກແນ່ເຊັ່ນ: ຫ່ວາງຕົ້ນ ຕໍ່ຕົ້ນ 0.75 ແມັດ ຫ່ວາງແຖວຕໍ່ແຖວ 1.5 ແມັດ.
- ຄວນປູກມອນຊ່ວງຕົ້ນລະດູຝົນລະຫວ່າງເດືອນ 4 – 5 ຂອງທຸກປີ.

## <u>ການປູກຕົ້ນມອນມີ 2 ວິທີຄື.</u>

6.1 ການປູກງ່າໃນສວນໂດຍກົງ ເປັນວິທີທີ່ງ່າຍແຕ່ເປືອງທ່ອນພັນ, ຜົນໄດ້ຮັບບໍ່ສູງ, ປູກແລ້ວມີຕົ້ນທີ່ຕາຍຫລາຍ, ນານໃຫຍ່ ໃຫ້ຜົນຜະລິດຊ້າປູກປີທຳອິດບໍ່ໄດ້ລ້ຽງມ້ອນ, ຕ້ອງເປັນປີທີ 2 ຈຶ່ງໄດ້ລ້ຽງມ້ອນ.

6.2 ການຊຳໃນໜານໄດ້ 3 ເດືອນແລ້ວຈຶ່ງຍ້າຍໄປປູກເປັນວິທີທີ່ດີເປີເຊັນຕາຍມີໜ້ອຍ, ໃຫ້ຜົນຜະລິດໄວ, ຕົ້ນມອນຂຶ້ນສະເໝີ່ສະເໝີ, ປູກປີໃດໄດ້ລ້ຽງມ້ອນປີນັ້ນ.



**ປູກດ້ວຍກິ່ງ 4 ເດືອນ**



**ປູກດ້ວຍເບັ້ຍທີ່ຊຳແລ້ວພຽງ 30 ວັນ.**

## 7. **ການດູແລຮັກສາ, ບົວລະບັດຕົ້ນມອນ.**

- ຕ້ອງຮົ້ວອ້ອມສວນມອນ ບໍ່ໃຫ້ສັດທຳລາຍ.
- ເສຍຫຍ້າຮົກອອກຈາກຫວ່າງຕົ້ນມອນ.
- ພວນດິນໃສ່ຝຸ່ນແຕ່ລະປີ.ອາດຈະໃສ່ຝຸ່ນຄອກຫລືຝຸ່ນບົ່ມປີລະ 1 - 2 ຄັ້ງ ແລ້ວແຕ່ຄວາມເໝາະສົມ ຫລື ອາດຈະໃສ່ຝຸ່ນຂຽວ ດ້ວຍວິທີຂຸດຮ່ອງຕາມຫວ່າງແຖວຂອງຕົ້ນມອນແລ້ວ ເສຍຫຍ້າ ລົງໃສ່ຂຸມເອົາຝຸ່ນຄອກໂຮຍແລ້ວຖົມໄວ້. ເມື່ອຫຍ້ານັ້ນເປື່ອຍຈະເປັນຝຸ່ນທີ່ດີທີ່ສຸດສຳລັບຕົ້ນມອນ.
- ຮັກສາຄວາມຊຸ່ມໃຫ້ຕົ້ນມອນດ້ວຍການຄຸມດິນ. ຈາກເສດພືດ ຫລື ເຟືອງເຂົ້າ.

-ໃຫ້ນ້ຳສວນມອນລະດູແລ້ງຖ້າມີຊົນລະປະທານ.



**ຕົ້ນມອນປູກໃໝ່ຕ້ອງເສຍຫຍ້າໃຫ້ກ້ຽງ**



## 16. **ການລ້ຽງມ້ອນອາຍຸແກ່ ( ອາຍຸ 4 – 5 ).**

- ການລ້ຽງມ້ອນແກ່ກໍ່ຄ້າຍຄືກັບການລ້ຽງມ້ອນອ່ອນຕ່າງແຕ່ວ່າ.
- ຊອຍໃບມອນໃຫ່ຍຂຶ້ນ.
- ໃຊ້ໃບມອນຫລາຍຂຶ້ນ.
- ໃບມອນແກ່ຂຶ້ນ ( ໃບມີສີຂຽວເຂັ້ມ ).
- ໃຊ້ເນື້ອທີ່ຢູ່ຫລາຍຂຶ້ນ.
- ເພີ່ມການເສຍຂີ້ຂຶ້ນຕື່ມ ໂດຍສະເພາະອາຍຸ 5 ເສຍຂີ້ທຸກມື້.
- ຄວບຄຸມອຸນນະພູມ ແລະ ຄວາມຊຸ່ມໃຫ້ເໝາະສົມ.



**ມ້ອນອາຍຸ 5 ທີ່ລ້ຽງແໜ້ນເກີນໄປ.**

## 17. **ຢາກລ້ຽງມ້ອນຕ້ອງມີສວນມອນຫລາຍປານໃດ?.**

- ການລ້ຽງມ້ອນແບ່ງອອກເປັນ 2 ຮູບແບບຄື:

+ ການລ້ຽງມ້ອນເພື່ອເປັນປະເພນີ.

+ ໃຊ້ໃບມອນອ່ອນຖັດຈາກຍອດລົງມາຕາມລຳດັບ ແຕ່ອາຍຸ 1 - 3 ບໍ່ໃຫ້ເກີນໃບທີ 9

+ ຊອຍໃບມອນເປັນຮູບສີ່ລ່ຽມລວງກ້ວາງເທົ່າກັບລວງຍາວຂອງໂຕ ມ້ອນລວງຍາວ ເທົ່າ 2 ເທື່ອລວງກ້ວາງຂອງໃບມອນທີ່ຊອຍ.

**Ã** ວິທີເສຍຂີ້ມ້ອນທີ່ຖືກຕ້ອງ: ບໍ່ຄວນໃຊ້ມືຈັບໂຕມ້ອນນ້ອຍໃນເວລາເສຍຂີ້, ຄວນໃຊ້ຕານ່າງເສຍຂີ້ມ້ອນ.

+ ອາຍຸ1 ຄວນເສຍຂີ້ 1 ຄັ້ງກ່ອນມ້ອນນອນຄັ້ງທຳອິດ.

+ ອາຍຸ 2 ເສຍຂີ້ 2 ຄັ້ງຫັລງຕື່ນນອນ ແລະ ກ່ອນນອນຄັ້ງທີ 2.

+ ອາຍຸ 3 ເສຍຂີ້ 2 ຄັ້ງຫັລງຕື່ນນອນ ແລະ ກ່ອນນອນຄັ້ງທີ່ 3.

**Ã** ຂະຫຍາຍເນື້ອທີ່ສຳລັບລ້ຽງມ້ອນ1ແຜ່ນ.ບໍ່ໃຫ້ມ້ອນຢູ່ແໜ້ນກັນໂພດ ອາຍຸ 1 ອາດຈະໃຊ້ 1 ໂຫ່, ອາຍຸ 2 ອາດຈະໃຊ້ 2 ໂຫ່ຂະຫຍາຍຂຶ້ນໄປເລື້ອຍໆ ແລ້ວແຕ່ຄວາມເໝາະສົມໃຫ້ໂຕມ້ອນຢູ່ໂຕລຽນໂຕບໍ່ໃຫ້ໂຕມ້ອນໄດ້ບຽດ ຫລື ກອງກັນຢູ່.



**ມ້ອນນ້ອຍອາຍຸ 2**



**ໃຊ້ແກບເຜົາໂຮຍມ້ອນນອນ**



## 8.<u>ການຕັດແຕ່ງຕົ້ນມອນ(ເປັນຫັຍງຈິ່ງຕັດແຕ່ງຕົ້ນມອນ)</u>

- ຕົ້ນມອນປູກໄດ້ 8 ເດືອນຫາ 1 ປີ ແລ້ວຕ້ອງມີການຕັດແຕ່ງ.
- ຈຸດປະສົງຂອງການຕັດແຕ່ງແມ່ນ:
  + ເຮັດໃຫ້ໄດ້ໃບມອນອ່ອນ ແລະ ງາມຢູ່ສະເໝີ.
  + ຕັດໃບມອນແກ່ ທີ່ເປັນພະຍາດໄປຖິ້ມ.
- ບໍ່ຕັດແຕ່ງໃບມອນຈະນ້ອຍ, ມັກເກີດພະຍາດ.ໃຫ້ຜົນຜະລິດໜ້ອຍ.

**Ã** ການຕັດແຕ່ງມີ 3 ວິທີຄື:

+ ການຕັດຕ່ຳປີທຳອິດຕັດສູງຈາກໜ້າດິນ 25 - 30 ຊມ ຫລັງຈາກປີທີ່ 2 ຫລື 3 ຂຶ້ນໄປຕັດສູງຈາກບ່ອນເກົ່າ 5 ຊມ.

+ ຕັດຕ່ຳຕັດລະຫ່ວາງເດືອນ 12 - 3 ຂອງທຸກໆປີ.

+ ຕັດກ່ອນການລ້ຽງມ້ອນ 90 ວັນ ຕັດປີລະຄັ້ງ.

**Ã** ຕັດກາງຕັດລະຫ່ວາງກາງລຳຕົ້ນ ຕັດກ່ອນການລ້ຽງມ້ອນ 75 ວັນ.

**Ã** ຕັດສູງຕັດໄກ້ກັບຍອດຕັດກ່ອນການລ້ຽງມ້ອນ 45 - 60 ວັນ.



**ຕັດຕ່ຳປີທີ 1.**



**ການຕັດກາງຕົ້ນມອນ.**

## 9.ການເລືອກສະຖານທີ່ຕັ້ງເຮືອນລ້ຽງມ້ອນ.

- ບ່ອນອາກາດປອດໂປ່ງ, ອາກາດສາມາດຖ່າຍເທໄດ້ສະດວກມີແສງສະຫວ່າງພຽງພໍ.
- ໃກ້ກັບແຫລ່ງນໍ້າ ເພື່ອສະດວກເວລາອະນາໄມ ເພາະທຸກຄັ້ງກ່ອນ ແລະ ຫລັງການລ້ຽງມ້ອນ ຕ້ອງໄດ້ອະນາໄມເຮືອນລ້ຽງມ້ອນ, ຖູພື້ນລ້າງຮອບໆທັງໃນ ແລະ ນອກເຮືອນລ້ຽງມ້ອນ, ລ້າງກະດົ້ງ, ໂຫ່ ແລະ ເຄື່ອງໃຊ້ຕ່າງໆທຸກຄັ້ງທີ່ມີການປ່ຽນຖ່າຍ.
- ບໍ່ຫ່າງໄກສວນມອນຈົນເກີນໄປ ຈະບໍ່ສະດວກເວລາໄປຂົນໃບມອນມາເກືອມ້ອນ, ໃບມອນຫ່ຽວກ່ອນມາເຖິງເຮືອນລ້ຽງມ້ອນ.
- ບໍ່ໃກ້ກັບສວນຢາສູບ ເພາະຢາສູບເປັນອັນຕະລາຍຕໍ່ໂຕມ້ອນ ເຮັດໃຫ້ໂຕມ້ອນຕາຍເມື່ອຖືກກັບຄວັນ ຫລື ກິ່ນຂອງຢາສູບ.
- ບໍ່ຢູ່ສະຖານທີ່ຊຸມຊົນແອອັດ ເພື່ອຫລີກເວັ້ນການໃຊ້ສານເຄມີ, ການສູບຢາຂອງຊຸມຊົນ, ການໃຊ້ຢາຍ້ອມມຸ້ງ, ການແຕ່ງອາຫານການກິນ ແລະ ອື່ນໆ.
- ບໍ່ຢູ່ຈຸດໃຈກາງຂອງສວນມອນທີ່ລກເວັ້ນການຕິດເຊື້ອພະຍາດ ຈາກເສດການລ້ຽງມ້ອນ,ການໃຊ້ຢາຂ້າພະຍາດເວລາອະນາໄມອຸປະກອນ.

## 10 .ການເຮັດເຮືອນລ້ຽງມ້ອນຕ້ອງເຮັດແນວໃດ

- ຄວນມຸງດ້ວຍຫ້ຍາ ຫລື ໃບຄໍ້ຕາມທີ່ຊາວບ້ານຫາໄດ້.
- ມີຝາແອ້ມໃຫ້ແຈບດີບໍ່ໃຫ້ສັດຕູຂອງໂຕມ້ອນເຂົ້າໄປທຳລາຍໄດ້ໂດຍສະເພາະໜູ ແລະ ແມງວັນລາຍ.
- ມີປ່ອງຢ້ຽມລະບາຍອາກາດ ແລະ ໃຫ້ແສງສະຫ່ວາງພຽງພໍ.



ນອນສ່ວນຫລາຍແລ້ວ ໃຫ້ປັດເອົາພຽງຄັ້ງດຽວບໍ່ຄວນປັດຫລາຍຄັ້ງ.

### ຂັ້ນຕອນປັດໃຫ້ປະຕິບັດດັ່ງນີ້:

- ໃຊ້ໃບມອນອ່ອນທີ່ເປັນສີນໍ້າຕານ ຊອຍມຸ່ນໆໂຮຍໃສ່ໂຕມ້ອນໃຫ້ທົ່ວ.
- 10 ນາທີຕໍ່ມາປັດມ້ອນນ້ອຍດ້ວຍຂົນໄກ່ອອກຈາກແຜ່ນໄຂ່ໃສ່ກະດົ້ງ.
- ຂະຫຍາຍໂຕມ້ອນ ເປັນຮູບສີ່ຫລ່ຽມປະມານ 2 ເທົ່າ ຂອງເນື້ອທີ່ໄຂ່.
- ໃຊ້ໃບມອນອ່ອນໃບທີ່ 1 ເກືອເປັນຄາບທຳອິດ.




**ມ້ອນທີ່ເບາະອອກມາໃໝ່ໆ ກຳລັງປັດມ້ອນ**

## 15. ການລ້ຽງມ້ອນອາຍຸອ່ອນ ( ອາຍຸ 1 – 3 ).

**Ã** ວິທີໃຫ້ອາຫານທີ່ຖືກຕ້ອງ ( ເກືອມ້ອນນ້ອຍວັນລະ 3 - 4 ຄັ້ງ ).

ທົນທານຕໍ່ສະພາບແວດລ້ອມໄດ້ດີ. ສາມາດເອົາແນວພັນໄດ້ເອງ. ປະຢັດ ທຶນຕົ້ນບໍ່ໄດ້ສັ່ງຊື້ໄຂ່ຈາກສູນຜະລິດໄຂ່. ແຕ່ຕ້ອງໄດ້ປະສົມພັນຂ້າມກະດົ້ງ ຫລື ສາຍເລືອດທຸກຄັ້ງຢ່າງຕໍ່ເນື່ອງທີ່ມີການຮັກສາພັນ.



**ມ້ອນນາງລາຍ**



**ຮັງຫລອກມ້ອນນາງລາຍ**



**ມ້ອນນາງໝົ່ນ**



**ຮັງຫລອກມ້ອນນາງໝົ່ນ**

## 14. <u>ຂັ້ນຕອນການປັດມ້ອນນ້ອຍ</u>.

ກ່ອນການປັດມ້ອນໃຫ້ສັງເກດເບິ່ງ ໂຕມ້ອນທີ່ເບາະອອກມາໃນແຜ່ນໄຂ່ມີໜ້ອຍຫລາຍສ່ຳໃດ, ບໍ່ຄວນປັດມ້ອນທີ່ເບາະອອກມາພາຍໃນມື້ໃດມື້ນັ້ນ ( ບໍ່ປະໄວ້ຂ້າມຄືນ ) ຖ້າມ້ອນເບາະເປັນຈໍາ



- ມີຮ່ອງນ້ຳກັນມົດບໍ່ໃຫ້ມົດເຂົ້າທຳລາຍໂຕມ້ອນ.
- ມີແຍ່ງກັນແມງວັນ, ມີຫ້ອງດັກແມງວັນ.
- ສາມາດກັນສັດຕູມ້ອນຈຳພວກ ໜູ, ມົດ, ຈີໂກະ, ຈີກຸ້ງມ ແລະ ແມງວັນລາຍໄດ້ເປັນຢ່າງດີ.
- ທາງໃນຄວນສ້າງເປັນຊັ້ນໆ ສຳລັບວາງກະດົ້ງມ້ອນ ແລະ ຫ້ອງເກັບມ້ຽນໃບມອນ.



**ເຮືອນລ້ຽງມ້ອນແບບຊາວບ້ານ**

## 11.<u>ເຄື່ອງມືຮັບໃຊ້ການລ້ຽງມ້ອນທີ່ຈຳເປັນ</u>

ອຸປະກອນທີ່ຈຳເປັນມີຄື: ກະດົ້ງ ( ໂຫ່ ),ຮ້ານມ້ອນ, ຜ້າປົກມອນ, ຜ້າປົກມ້ອນ,ມີດ, ຊຽງ, ຂົນໄກ່, ໄມ້ຖູ່, ກະຕ່າໃສ່ໃບ

ມອນ, ກະຈາດໃສ່ ໃບມອນ, ກະແຕະມ້ອນສຸກ, ຊາມນ້ຳລ້າງມືຈຳພວກນີ້ເປັນຕົ້ນ.



-

**ອຸປະກອນຮັບໃຊ້ໃນເຮືອນລ້ຽງມ້ອນ**

- ນອກນີ້ຍັງມີຟອຍກວດ, ກະໂສະຂີ້ເຫຍື້ອ, ກະປອງໃສ່ມ້ອນທີ່ເປັນພະຍາດ.
- ແພອັດປາກ, ເກີບສະເພາະເຂົ້າເຮືອນລ້ຽງມ້ອນ, ເຄື່ອງນຸ່ງປ່ຽນຖ່າຍເວລາເຂົ້າລ້ຽງມ້ອນ.
- ຊາມນ້ຳຢາກູ້ລິນລ້າງມືກ່ອນລ້ຽງມ້ອນທຸກຄັ້ງ. ເຄື່ອງມືຕ້ອງໃຊ້ແບບງ່າຍດາຍຜະລິດໄດ້ເອງ, ໃຊ້ທຶນຕົ້ນຕ່ຳ ໂດຍສະເພາະຈໍ່ຕ້ອງເລືອກໃຊ້ຈໍ່ແບບຊາວບ້ານເຊັ່ນ: ຈໍ່ໄສ້ຊ້າງ, ຈໍ່ຄ້ອມ.

## 12. <u>ການອະນາໄມອຸປະກອນການລ້ຽງມ້ອນ</u>

- ອຸປະກອນທຸກອັນທີ່ໃຊ້ສຳລັບການລ້ຽງມ້ອນ ຕ້ອງລ້າງໃຫ້ສະອາດດ້ວຍສະບູຝຸ່ນ, ຕາກແດດໃຫ້ແຫ້ງ, ໃຊ້ສ່ວນປະສົມຂອງຢາກູ້ລິນກັບນ້ຳສະອາດໃນອັດຕາສ່ວນ ( ຢາ 100 ກະລາມ ປະສົມກັບນ້ຳ 10



ລິດ ) ທົດອຸປະກອນຕ່າງໆໃຫ້ທົ່ວ, ຕາກໃຫ້ແຫ້ງກ່ອນເກັບຮັກສາໄວ້ບ່ອນເດີມ.
- ຕາກແຫ້ງແລ້ວເກັບຮັກສາໄວ້ໃນເຮືອນລ້ຽງມ້ອນບ່ອນເດີມ.
- ຖ້າປະໄວ້ດົນກ່ອນການລ້ຽງມ້ອນໃຫ້ຊີດຢາໃສ່ອຸປະກອນອີກ, ຕາກໃຫ້ແຫ້ງແລ້ວຈຶ່ງເອົາໄປນຳໃຊ້ການລ້ຽງມ້ອນ.
- ທຸກຄັ້ງທີ່ເອົາດົ້ງມາເພີ່ມ ຫລື ປ່ຽນຖ່າຍໃຫ້ອະນາໄມກ່ອນຈຶ່ງເອົາມານຳໃຊ້.



**ໃຊ້ສ່ວນປະສົມຢາກູ້ລິນທົດອຸປະກອນການລ້ຽງມ້ອນ**

## 13. <u>ການເລືອກແນວພັນມ້ອນ.</u>

- ເລືອກລ້ຽງພັນມ້ອນພື້ນເມືອງທີ່ຫາໄດ້ໃນທ້ອງຖິ່ນເຊັ່ນ: ມ້ອນນາງລາຍ, ນາງໜ່ິນ, ທີ່ທົນທານຕໍ່ສະພາບແວດລ້ອມໄດ້ດີ, ມີອາຍຸການກິນໃບມອນສັ້ນ. ໃຫ້ເສັ້ນໄໝຫລາຍ ( ຝັກຫລອກແຂງ ).ພໍສົມຄວນ